ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********************

ກະຊວງການເງິນ

ກົມພາສີ

ເລກທີ 2040/ກພສ

ນະຄອນຫຼວງວຽງຈັນ,ວັນທີ 05 JUL 2011

# ແຈ້ງການ

ເຖິງ: ບັນດາອົງການຈັດຕັ້ງຂອງລັດ,ອົງການຈັດຕັ້ງສາກົນ,ລັດວິສາຫະກິດ,ບຸກຄົນ,ນິຕິບຸກຄົນ ຫຼືວໜ່ວຍທຸລະກິດຂາອອກ-ຂາເຂົ້າພາຍໃນ ແລະຕ່າງປະເທດ.

**ເລື່ອງ:** ການກຳນົດມູນຄ່າແຈ້ງພາສີຕາມລາຄາຊື້-ຂາຍຕົວຈິງ ສຳລັບການນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສອຍທົ່ວໄປ.

- ອີງໃສ່ ກົດໝາຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 25 ພຶດສະພາ 2005.
- ອີງໃສ່ ດຳລັດ362/ນຍ,ລົງວັນທີ19ຕຸລາ2007ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ພາສີ.
- ອີງໃສ່ບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ1398/ກງລົງວັນທີ16/06/2010 ວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂາເຂົ້າ.

ເພື່ອເຮັດໃຫ້ການຄຸ້ມຄອງແລະການຈັດຕັ້ງປະຕິບັດມູນຄ່າແຈ້ງພາສີສອດຄ່ອງກັບລະບຽບກົດໝາຍວ່າດ້ວຍພາສີ ແລະລະບຽບການຂອງອົງການ ການຄ້າໂລກກຳນົດໄວ້.

## ກົມພາສີອອກແຈ້ງການ

1. ເຫັນດີໃຫ້ຈັດຕັ້ງປະຕິບັດການກຳນົດມູນຄ່າແຈ້ງພາສີຕາມລາຄາຊື້-ຂາຍຕົວຈິງ ສຳລັບການນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສອຍທົ່ວໄປ ຕາມທີ່ກຳນົດໄວ້ຢູ່ໃນມາດຕາ 13 ຂອງກົດໝາຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20/05/2005 ຢ່າງເຂັ້ມງວດ.

2. ເຫັນດີໃຫ້ລົບລ້າງແລະຢຸດຕິການນຳໃຊ້ບັນດານິຕິກຳທີ່ກ່ຽວຂ້ອງກັບການກຳນົດລາຄາຕ່ຳສຸດສຳລັບການແຈ້ງພາສີນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສອຍທົ່ວໄປທີ່ອະນຸມັດຈາກກົມພາສີ ໃນໄລຍະຜ່ານມາທຸກສະບັບ ແລະໃຫ້ປະຕິບັດມູນຄ່າແຈ້ງພາສີຕາມລາຄາຊື້ - ຂາຍຕົວຈິງ.

3. ມອບໃຫ້ບັນດາພະແນກອອັມຂ້າງກົມພາສີ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດຈັດຕັ້ງປະຕິບັດເຜີຍແຜ່ແຈ້ງການສະບັບນີ້ ໃຫ້ບັນດາອົງການຈັດຕັ້ງຂອງລັດ,ອົງການຈັດຕັ້ງສາກົນ ລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນ,ຫົວໜ່ວຍທຸລະກິດຂາອອກ-ຂາເຂົ້າພາຍໃນ ແລະຕ່າງປະເທດທຸກພາກສ່ວນທີ່ນຳເຂົ້າສິນຄ້າ,ເຄື່ອງຂອງໃຊ້ສອຍທົ່ວໄປໄດ້ຮັບຊາບ ແລະເຂົ້າໃຈຕໍ່ລະບຽບການດັ່ງກ່າວ ເພື່ອຮ່ວມມືໃນທາງປະຕິບັດຢ່າງຮັດກຸມ.

4. ແຈ້ງການສະບັບນີ້ມີຜົນສັກສິດ ແລະໃຫ້ເລີ້ມຈັດຕັ້ງປະຕິບັດນັບແຕ່ວັນທີ 01ສິງຫາ ປີ2011ເປັນຕົ້ນໄປຢ່າງເປັນເອກະພາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບແລະຮ່ວມມືໃນທາງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມພາສີ

ສົມດີພາບ ພົມວິຫານ

<u>ບ່ອນສົ່ງ</u>: ທ່ານ ລັດຖະມົນຕີວ່າການກະຊວງການເງິນ ເພື່ອລາຍງານ
- ກົມນະໂຍບາຍການຄ້າຕ່າງປະເທດ ເພື່ອຊາບ
- ກົມນຳເຂົ້າ-ສົ່ງອອກ ເພື່ອຊາບ
- ກົມສ່ວຍສາ ອາກອນ ເພື່ອຊາບ
- ອົງການຈັດຕັ້ງຂອງລັດທຸກພາກສ່ວນ ເພື່ອຊາບ
- ພະແນກອອັມຂ້າງກົມພາສີ ເພື່ອປະຕິບັດ
- ພາສີປະຈຳເຂດ I,II,III,IV,V ເພື່ອປະຕິບັດ
- ດ່ານພາສີຊາຍແດນທົ່ວປະເທດ ເພື່ອປະຕິບັດ
- ອື່ນໆທີ່ກ່ຽວຂ້ອງ